ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

໑໑໑໑ ▭ ໒໒໒໒

ທະນາຄານແຫ່ງ ສປປ ລາວ

ກົມຈັດຕັ້ງແລະພະນັກງານ

ເລກທີ 251 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 02 AUG 2016

ສຳນັກງານ ຄຄຊ

ລົງຮັບ ເລກທີ 0233

ວັນທີ 09 AUG 2016

ໂທລະສັບ 021 217...

## ຄຳແນະນຳ

**ເຖິງ:** - ບັນດາທ່ານ ຫົວໜ້າກົມ-ທຽບເທົ່າພາຍໃນ ທະນາຄານແຫ່ງ ສປປ ລາວ;

- ບັນດາທ່ານ ຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ປະຈຳແຕ່ລະພາກ;
- ບັນດາທ່ານ ຜູ້ອຳນວຍການທະນາຄານລັດ.

**ເລື່ອງ:** ແນະນຳເພີ່ມເຕີມ ຕໍ່ກັບບາງເນື້ອໃນຂອງຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບຂອງຄະນະຜູ້ອຳການທະນາຄານແຫ່ງ ສປປ ລາວ.

- ອີງຕາມຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບຂອງຄະນະຜູ້ອຳການ ທຫລ ສະບັບເລກທີ **579/ທຫລ** ລົງວັນທີ **21/07/2016.**

ກົມຈັດຕັ້ງແລະພະນັກງານ ຂໍແຈ້ງມາຍັງທ່ານ ຊາບ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບຂອງຄະນະຜູ້ອຳການທະນາຄານແຫ່ງ ສປປ ລາວ ສະບັບເລກທີ 579/ທຫລ ລົງວັນທີ 21/07/2016 ຊຶ່ງການແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບດັ່ງກ່າວ ແມ່ນໄດ້ແບ່ງການຊີ້ນຳ-ນຳພາ ຕາມລັກສະນະຂອງວຽກງານ, ໃນນີ້ວຽກງານໜຶ່ງອາດຈະຕິດພັນກັບຫຼາຍກົມກອງ ຫຼື ຫຼາຍວຽກງານອາດຈະຕິດພັນໂດຍກົງກັບພາລະບົດບາດຂອງກົມກອງດຽວ. ສະນັ້ນ, ຈຶ່ງແນະນຳເພີ່ມເຕີມການຊີ້ນຳຂອງຄະນະຜູ້ອຳການທະນາຄານແຫ່ງ ສປປ ລາວ ໃນບາງກຸ່ມວຽກ ເພື່ອໃຫ້ມີຄວາມຈະແຈ້ງຍິ່ງຂຶ້ນຄືດັ່ງນີ້:

1. **ວຽກງານສະຖຽນລະພາບເງິນຕາ** ແມ່ນຕິດພັນຕົ້ນຕໍໂດຍກົງກັບໜ້າວຽກຂອງກົມນະໂຍບາຍເງິນຕາ ແລະ ບາງວຽກຂອງກົມບໍລິການທະນາຄານ;
2. **ວຽກງານເງິນຕາ-ທະນະບັດ** ແມ່ນຕິດພັນຕົ້ນຕໍໂດຍກົງກັບໜ້າວຽກຂອງກົມເງິນຕາ ແລະ ໂຮງພິມທະນະບັດ;
3. **ວຽກງານນິຕິກຳ** ແມ່ນຕິດພັນຕົ້ນຕໍໂດຍກົງກັບການສ້າງ ແລະ ປັບປຸງບັນດານິຕິກຳ ໃນການຄົ້ນຄວ້າມະຫາພາກທາງດ້ານການເງິນ-ເງິນຕາ, ທະນາຄານທຸລະກິດ, ສະຖາບັນການເງິນ ແລະ ອື່ນໆ ທີ່ກຳນົດຢູ່ໃນພາລະບົດບາດຂອງທະນາຄານແຫ່ງ ສປປ ລາວ ຊຶ່ງໃນຕໍ່ໜ້າຈະມີກົມນິຕິກຳ ມາຮັບຜິດຊອບລົງເລິກໃນວຽກງານນີ້;
4. **ບັນດາທະນາຄານລັດ** ແມ່ນບັນດາທະນາຄານທີ່ລັດຖືຮຸ້ນຫຼາຍກວ່າ 50% ຂຶ້ນໄປ; ໃນປັດຈຸບັນທະນາຄານລັດປະກອບດ້ວຍ: ທະນາຄານທຸລະກິດລັດ 3 ແຫ່ງ ຄື: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ; ແລະ ທະນາຄານສະເພາະກິດ 1 ແຫ່ງ ຄື: ທະນາຄານນະໂຍບາຍ;
5. **ວຽກງານຈັດຕັ້ງ, ພັກ-ພະນັກງານ** ແມ່ນຕິດພັນຕົ້ນຕໍໂດຍກົງກັບໜ້າວຽກຂອງກົມຈັດຕັ້ງແລະພະນັກງານ;
6. **ວຽກງານທະນາຄານແຫ່ງ ສປປ ລາວ ປະຈຳທ້ອງຖິ່ນ** ແມ່ນຕິດພັນຕົ້ນຕໍໂດຍກົງກັບການເຄື່ອນໄຫວປະຕິບັດພາລະບົດບາດ-ໜ້າທີ່ຂອງສາຂາທະນາຄານແຫ່ງ ສປປ ລາວ ທີ່ປະຈຳຢູ່ແຕ່ລະທ້ອງຖິ່ນ;
7. **ວຽກງານທັບເປັນທັບລະໄໝ** ແມ່ນຕິດພັນຕົ້ນຕໍໂດຍກົງກັບໜ້າວຽກຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ;

8. **ວຽກງານຫຼັກຊັບ** ແມ່ນຕິດພັນຕົ້ນຕໍໂດຍກົງກັບໜ້າວຽກຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ;

9. **ວຽກງານຊໍາລະສະສາງ** ແມ່ນຕິດພັນຕົ້ນຕໍໂດຍກົງກັບໜ້າວຽກຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ, ກົມບັນຊີ ແລະການເງິນ ແລະ ບາງວຽກຂອງກົມບໍລິການທະນາຄານ.

➲ ຜັນຂະຫຍາຍມາດຕາ 2 ຂໍ້ທີ 6: "**ການແບ່ງງານຮັບຜິດຊອບ ແມ່ນການຊີ້ນໍາຮອບດ້ານໂດຍກົງ. ສໍາລັບວຽກງານສະເພາະ ແຕ່ລະວຽກງານວິຊາສະເພາະດ້ານ ແມ່ນໃຫ້ຜູ້ຊີ້ນໍາກົມກອງທີ່ຕົນຊີ້ນໍາ ເປັນຜູ້ຄົ້ນຄວ້າ-ຊີ້ນໍາແກ້ໄຂ**"

**ໝາຍຄວາມວ່າ:** ຄະນະຜູ້ວ່າການ ທີ່ຮັບຜິດຊອບຊີ້ນໍາແຕ່ລະວຽກງານ ຕາມການແບ່ງງານ ແລະ ການມອບໝາຍ ຕ້ອງເປັນເຈົ້າການຄົ້ນຄວ້າແກ້ໄຂໂດຍກົງ ຫຼື ຊີ້ນໍາກົມກອງທີ່ຕິດພັນຕາມຂອບເຂດສິດ. ພ້ອມນີ້, ແຕ່ລະກົມກອງ ຕ້ອງປະຕິບັດຕາມຂອບເຂດສິດຂອງຕົນໃນການແກ້ໄຂວຽກງານ ຕາມພາລະບົດບາດ-ໜ້າທີ່ ພາຍຫຼັງທີ່ໄດ້ຮັບການມອບໝາຍ ຫຼື ການຊີ້ນໍາຈາກຄະນະຜູ້ວ່າການ. ເວົ້າລວມແມ່ນການຍົກສູງຄວາມຮັບຜິດຊອບຂອງຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໃນການຊີ້ນໍາ-ນໍາພາແຕ່ລະວຽກງານ; ພ້ອມນີ້, ບັນດາກົມກອງ ຕ້ອງເປັນເຈົ້າການປະຕິບັດພາລະບົດບາດ, ຂອບເຂດສິດ-ໜ້າທີ່ຕົນຢ່າງເຕັມສ່ວນ, ຫຼີກລ້ຽງການຄອງຄອຍ ແລະ ລໍຖ້າແຕ່ຄໍາສັ່ງຂັ້ນເທິງ ຫຼື ບໍ່ກ້າຕັດສິນແກ້ໄຂວຽກງານ ຕາມຂອບເຂດສິດທີ່ກໍານົດໄວ້.

ດັ່ງນັ້ນ, ຈຶ່ງແຈ້ງແນະນໍາມາຍັງທ່ານ ຮັບຊາບ ແລະ ເປັນເຈົ້າການປະຕິບັດຕາມເນື້ອໃນຂອງຄໍາແນະນໍາສະບັບນີ້.

**ຫົວໜ້າກົມຈັດຕັ້ງແລະພະນັກງານ**

ພານຸສັກ ແກ່ນວົງພະຈັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 579 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 21 JUL 2016

ສຳນັກງານ ຄຄຊ
ເລກທີ 0334
ວັນທີ 09 AUG 2016
ໂທລະສັບ 021 217770

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງຄວາມຮັບຜິດຊອບ

## ຂອງຄະນະຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14/10/1999;
- ອີງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນໄລຍະໃໝ່;
- ອີງຕາມການຕົກລົງຂອງກອງປະຊຸມຄະນະປະຈຳພັກ-ຄະນະຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 15/07/2016.

## ຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1** ແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບພາຍໃນຄະນະຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ ດັ່ງນີ້:

**1. ທ່ານ ປອ. ສົມພາວ ໄຟສິດ ຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ:**

- ຊີ້ນຳ-ນຳພາການເຄື່ອນໄຫວຮອບດ້ານ ໃນການປະຕິບັດພາລະບົດບາດ, ໜ້າທີ່ ແລະ ການຕັດສິນບັນຫາຕ່າງໆຂອງທະນາຄານແຫ່ງ ສປປ ລາວ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ແລະ ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ, ພ້ອມທັງຮັບຜິດຊອບຕໍ່ລັດຖະບານ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການຊີ້ນຳ-ນຳພາຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຂະແໜງການທະນາຄານ;
- ຊີ້ນຳລົງເລິກວຽກງານສະຖຽນລະພາບເງິນຕາ (ວຽກນະໂຍບາຍເງິນຕາ ແລະ ວຽກບໍລິການທະນາຄານ), ວຽກງານເງິນຕາ-ທະນະບັດ, ວຽກງານນິຕິກຳ ແລະ ການເຄື່ອນໄຫວຂອງບັນດາທະນາຄານລັດ;
- ມອບໝາຍບາງວຽກງານສະເພາະ ໃຫ້ຮອງຜູ້ອຳນວຍການໃດໜຶ່ງ ເພື່ອຊີ້ນຳການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດຕົວຈິງ.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

**2. ທ່ານ ຄຳວົງ ທິບພະວົງ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ:**

ຊ່ວຍຜູ້ວ່າການ ຊີ້ນຳ-ນຳພາວຽກງານບໍລິຫານ-ຫ້ອງການ, ວຽກງານຈັດຕັ້ງ, ພັກ-ພະນັກງານ, ວຽກງານກວດກາ, ວຽກງານກໍ່ສ້າງຊັບພະຍາກອນມະນຸດຂອງສະຖາບັນການທະນາຄານ ແລະ ວຽກງານອື່ນໆ ຕາມການມອບໝາຍຂອງຜູ້ວ່າການ.

**3. ທ່ານ ສອນໄຊ ສິດພະໄຊ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ:**

ຊ່ວຍຜູ້ວ່າການ ຊີ້ນຳ-ນຳພາການເຄື່ອນໄຫວວຽກງານທະນາຄານແຫ່ງ ສປປ ລາວ ປະຈຳທ້ອງຖິ່ນ, ວຽກງານຄຸ້ມຄອງສະຖາບັນການເງິນ, ວຽກງານປົກປ້ອງຜູ້ຝາກເງິນ, ວຽກງານບໍລິການເກັບຊື້ໜີ້-ຮັບຝາກເກັບໜີ້, ວຽກງານສະມາຄົມສະຖາບັນການເງິນ ແລະ ວຽກງານອື່ນໆ ຕາມການມອບໝາຍຂອງຜູ້ວ່າການ.

**4. ທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ:**

ຊ່ວຍຜູ້ວ່າການ ຊີ້ນຳ-ນຳພາວຽກງານຄຸ້ມຄອງທະນາຄານທຸລະກິດ, ວຽກງານພົວພັນສາກົນ, ວຽກງານຂໍ້ມູນຕ້ານການຟອກເງິນ, ວຽກງານຫຼັກຊັບ, ວຽກງານການທັນເປັນທັນສະໄໝ, ວຽກງານຊຳລະສະສາງ, ວຽກງານສະມາຄົມທະນາຄານ ແລະ ວຽກງານອື່ນໆ ຕາມການມອບໝາຍຂອງຜູ້ວ່າການ.

**ມາດຕາ 2** **ການພົວພັນ-ແກ້ໄຂວຽກງານ:**

1. ຮອງຜູ້ວ່າການ ທີ່ຊີ້ນຳວຽກງານສະເພາະ ທີ່ກຳນົດໃນມາດຕາ 1 ຂ້າງເທິງ ຕ້ອງຊີ້ນຳ-ນຳພາຢ່າງແທດເຖິງ ແລະ ມີຄວາມຮັບຜິດຊອບໂດຍກົງຕໍ່ຜູ້ວ່າການ;

2. ທຸກວຽກງານ ແລະ ເອກະສານຕ່າງໆ ທີ່ເປັນບັນຫາໃຫຍ່ ແລະ ສຳຄັນຍຸດທະສາດຂອງບັນດາກົມ-ທຽບເທົ່າ ແລະ ຄະນະຮັບຜິດຊອບວຽກງານຕ່າງໆ ທີ່ຂຶ້ນກັບຄະນະຜູ້ວ່າການ, ກ່ອນຈະນຳສະເໜີຕໍ່ຜູ້ວ່າການພິຈາລະນາ ຕ້ອງໄດ້ຜ່ານການຄົ້ນຄວ້າ ແລະ ມີຄວາມເຫັນຈາກຮອງຜູ້ວ່າການ-ຜູ້ຊ່ວຍລົງເລິກຊີ້ນຳ ສາກ່ອນ ຕາມການແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບຂ້າງເທິງ;

3. ວຽກງານປະຈຳວັນ ແລະ ບັນຫາຕ່າງໆທີ່ຢູ່ໃນແຜນການ ຊຶ່ງຄະນະຜູ້ວ່າການ ໄດ້ຕົກລົງເປັນເອກະພາບແລ້ວ ແມ່ນມອບໃຫ້ຮອງຜູ້ວ່າການ-ຜູ້ຊ່ວຍຊີ້ນຳວຽກງານກ່ຽວຂ້ອງ ແກ້ໄຂໂດຍກົງ;

4. ວຽກງານໃດໜຶ່ງ ທີ່ຜູ້ວ່າການ ມອບໃຫ້ບັນດາກົມ-ທຽບເທົ່າ ຫຼື ບຸກຄົນກ່ຽວຂ້ອງປະຕິບັດ, ໃຫ້ພາກສ່ວນ ຫຼື ບຸກຄົນດັ່ງກ່າວ ລາຍງານໃຫ້ຜູ້ວ່າການໂດຍກົງ; ຈາກນັ້ນ, ຈຶ່ງລາຍງານວຽກດັ່ງກ່າວ ທີ່ຜູ້ວ່າການໄດ້ຕົກລົງ ໃຫ້ຮອງຜູ້ວ່າການ-ຜູ້ຊ່ວຍລົງເລິກຊີ້ນຳ ຮັບຊາບ;

5. ໃນກໍລະນີຜູ້ວ່າການ ຫາກຕິດຂັດວຽກງານ ຫຼື ບໍ່ສາມາດປະຈຳການໄດ້, ຈະມອບໃຫ້ຮອງຜູ້ວ່າການໃດໜຶ່ງ ປະຕິບັດໜ້າທີ່ແທນຊົ່ວຄາວ ແລະ ພາຍຫຼັງຜູ້ວ່າການ ມາປະຈຳການ, ຮອງຜູ້ວ່າການ ທີ່ປະຕິບັດໜ້າທີ່ແທນ ຕ້ອງລາຍງານວຽກງານທີ່ຕົນໄດ້ຊີ້ນຳ-ແກ້ໄຂນັ້ນ ໃຫ້ຜູ້ວ່າການ ຮັບຊາບ;

6. ການແບ່ງງານຮັບຜິດຊອບ ແມ່ນການຊີ້ນຳຮອບດ້ານໂດຍກົງ. ສຳລັບວຽກງານສະເພາະ ແຕ່ລະວຽກງານວິຊາສະເພາະດ້ານ ແມ່ນໃຫ້ຜູ້ຊີ້ນຳກົມກອງທີ່ຕົນຊີ້ນຳ ເປັນຜູ້ຄົ້ນຄວ້າ-ຊີ້ນຳແກ້ໄຂ.

ມາດຕາ 3 ຫ້ອງການ ທະນາຄານແຫ່ງ ສປປ ລາວ, ບັນດາກົມ-ທຽບເທົ່າກົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ພ້ອມດ້ວຍຄະນະຜູ້ວ່າການ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 4 ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 584/ທຫລ ລົງວັນທີ 07/08/2015 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ




ດຣ ສົມພາວ ໄຟສິດ